# ຄູ່ມື ອມພ ( ລາຍຮັບ )

<u>**ຂັ້ນຕອນການອອກໃບ ອມພ**</u>

**1. ກົດໃສ່ເມນູ ລາຍຮັບ ຈາກເມນູຂ້າງເທິງ ແລ້ວກົດໃສ່ ລາຍຮັບ**




**2. ຫຼັງຈາກນັ້ນກົດໃສ່ + ເພີ່ມລາຍຮັບໃໝ່**




**3. ລະບົບຈະສະແດງຫ້ອງໃຫ້ເພີ່ມ ວັນທີ, ບັນຊີ, ອັດຕາແລກປ່ຽນ ແລະ ປະເພດ**




**ໝາຍເຫດ: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ**

- **ວັນທີ: ໝາຍເຖິງ ເລືອກວັນທີທີ່ເຮົາຂາຍສິນຄ້າ ຫຼື ການບໍລິການ**
- **ບັນຊີ: ໝາຍເຖິງ ບັນຊີທີ່ເລືອກໃຫ້ລາຍຮັບນັ້ນເຂົ້າບັນຊີໂຕໃດ**
- **ຈຳນວນ: ໝາຍເຖິງ ຈຳນວນມູນຄ່າເງິນຂອງລາຍຮັບ**
- **ປະເພດ: ໝາຍເຖິງ ກົດໃສ່ ຮູບ 3 ຫຼ່ຽມ ( ປະເພດຕາມທີ່ເຮົາຕ້ອງການ ຕົວຢ່າງ: ຂາຍການບໍລິການ ( ໃຫ້ເຮົາກົດໃສ່ຂາຍການບໍລິການອື່ນໆ )**

**4. ກົດ ໃສ່ຂໍ້ມູນເພີ່ມເຕີມ... ເພື່ອເພີ່ມລາຍລະອຽດສິນຄ້າ ຫຼື ບໍລິການ**




- **ລາຍການ: ໝາຍເຖິງ ເພີ່ມຊື່ລາຍການສິນຄ້າ ຫຼື ການບໍລິການ, ຖ້າມີລາຍການຍ່ອຍ ຫຼື ລາຍລະອຽດຕ່າງໆ ແມ່ນໃຫ້ພິມໃສ່ ຫ້ອງດ້ານລຸ່ມ, ກົດໃສ່ + ເພີ່ມ**
- **ຈຳນວນ: ໝາຍເຖິງ ຈຳນວນສິນຄ້າ ຫຼື ຈຳນວນການບໍລິການ ( ຖ້າຫົວໜ່ວຍບໍ່ມີໃຫ້ເຮົາເພີ່ມຢູ່ ເມນູສາງ => ຫົວໜ່ວຍ )**
- **ລາຄາ: ໝາຍເຖິງ ລາຄາສິນຄ້າ ຫຼື ການບໍລິການຕໍ່ຫົວໜ່ວຍ**
- **ອາກອນ: ກົດເລືອກ ຍົກເວັ້ນອາກອນ ຫຼື VAT ຫຼື X = ( ບໍ່ມີອາກອນ )**

**ຫຼັງຈາກນັ້ນເລື່ອນລົງມາ ເພີ່ມຂໍ້ມູນ ລູກຄ້າ ແລະ ກົດບັນທຶກ**




- **ລູກຄ້າ: ໝາຍເຖິງ ເພີ່ມຊື່ລູກຄ້າ ກົດໃສ່ຮູບ + ( ຫ້ອງສີຟ້າ ) ຈະມີບ່ອນເພີ່ມຂໍ້ມູນຂອງລູກຄ້າ**
- **ອາກອນ: ໝາຍເຖິງ ອາກອນລວມໃບບິນ ຖ້າເຮົາກົດ VAT ຢູ່ເຖິງ ແລ້ວກໍບໍ່ຈຳເປັນຕ້ອງກົດ**

**5. ວິທີເບິ່ງຕົວຢ່າງ ໃບເກັບ ເງິນອາກອນມູນຄ່າເພີ່ມ ໃຫ້ ກົດໃສ່ ຮູບ 3 ຫຼ່ຽມ ແລ້ວ ກົດ ເບິ່ງຕົວຢ່າງ ( ເພື່ອເບິ່ງຕົວຢ່າງວ່າໃບ ອມພ ທີ່ເຮົາຈະສ້າງຖືກຕ້ອງແລ້ວບໍ, ຄົບຖ້ວນຕາມໂຕຈິງບໍ, ເພາະວ່າຖ້າສ້າງໄປແລ້ວ ແມ່ນບໍ່ສາມາດແກ້ໄຂໄດ້ )**




**7. ກົດໃສ່ ສ້າງໃບເກັບເງິນອາກອນມູນຄ່າເພີ່ມ**




## 8. ລະບົບຈະຂຶ້ນມາເຕືອນ ໃຫ້ກົດໃສ່ OK ເພື່ອໃຫ້ລະບົບດຳເນີນການສ້າງໃບ ອມພ ໃຫ້




## 9. ຫຼັງຈາກທີ່ສ້າງສຳເລັດ ວິທີ ພິມໃບດຽວ: ກົດ ພິມໃບເກັບເງິນອາກອນມູນຄ່າເພີ່ມ ( ໃບສີແດງ ໄວ້ໃຫ້ສຳລູກຄ້າ)

### ວິທີພິມທັງໝົດ 3 ໃບ : ກົດໃສ່ ຮູບ 3 ຫຼ່ຽມ ແລ້ວ ກົດໃສ່ ໃບເກັບເງິນອາກອນມູນຄ່າເພີ່ມທັງໝົດ




ຫຼັງຈາກນັ້ນ ເຮົາຈະໄດ້ ໃບອາກອນມູນຄ່າເພີ່ມ ດັ່ງນີ້:



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບເກັບເງິນ** ເລກທີ: 000000000033

**ອາກອນມູນຄ່າເພີ່ມ**
ໃບທີ 1: ໃຫ້ສຳລັບຜູ້ຊື້

**ບໍລິສັດ**
ທີ່ຕັ້ງ:
ໂທລະສັບ:
ເລກບັນຊີ: ........ ທະນາຄານ: ........
ເລກປະຈຳຕົວຜູ້ເສຍອາກອນ: 0 0 0 0 0 0 0 0 0 - 0 - 0 0

ຊື່ວິສາຫະກິດ (ຜູ້ຊື້): **ລູກຄ້າທົດລອງ**
ທີ່ຕັ້ງ: 261/12 ບ້ານວັດນາກ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +85620 9999 9999
ເລກບັນຊີ: ........ ທະນາຄານ: ........
ເລກປະຈຳຕົວຜູ້ເສຍອາກອນ: 0 0 0 0 0 0 0 0 0 - 0 - 0 0 ຮູບການຊຳລະສະສາງ: ........

| # | ລາຍການ | ຫົວໜ່ວຍ | ຈຳນວນ | ລາຄາຫົວໜ່ວຍ | ລວມເປັນເງິນທັງໝົດ |
|---|---|---|---|---|---|
| 1 | 2 | 3 | 4 | 5 | 6=4x5 |
| 1 | ສິນຄ້າ A<br>ລາຍລະອຽດ ສິນຄ້າ A<br>XXXXX | ອັນ | 1.00 | 10.000.000 ກີບ | 10.000.000 ກີບ |

ລວມມູນຄ່າຂາຍບໍ່ມີອາກອນ: 10.000.000 ກີບ
ອັດຕາອາກອນມູນຄ່າເພີ່ມ 7%, ເປັນຈຳນວນເງິນ: 700.000 ກີບ
**ລວມມູນຄ່າທັງໝົດ: 10.700.000 ກີບ**

ຈຳນວນເງິນຂຽນເປັນຕົວໜັງສື: ສິບລ້ານ ເຈັດແສນ ກີບ

ວັນທີ: ........ ວັນທີ: 18/09/2023
ຜູ້ຊື້ ຜູ້ຂາຍ
(ລາຍເຊັນ ແລະ ກາປະທັບ) (ລາຍເຊັນ ແລະ ກາປະທັບ)

ສ້າງໂດຍ https://staging.bansi.la
ໃບອະນຸຍາດເລກທີ XXXXXX/XXX, ລົງວັນທີ 19/09/2023
ໜ້າ 1 | 1



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບເກັບເງິນ** ເລກທີ: 000000000033

**ອາກອນມູນຄ່າເພີ່ມ**
ໃບທີ 2: ຮັກສາໄວ້ທີ່ຕົ້ນຂົ້ວ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບເກັບເງິນ** ເລກທີ: 000000000033

**ອາກອນມູນຄ່າເພີ່ມ**
ໃບທີ 3: ເພື່ອລົງບັນຊີ

**ວິດີໂອ: [https://youtu.be/KXL-AgbT6kc](https://youtu.be/KXL-AgbT6kc)**